# ຂ່າວໃບລານ

ໂຄງການປົກປັກຮັກສາໜັງສືໃບລານລາວ ການຮ່ວມມືລາວ-ເຢຍຣະມັນ ປີທີ II ສະບັບທີ 5 ກັນຍາ 1994
PRESERVATION OF LAO MANUSCRIPTS PROGRAMME LAO-GERMAN COOPERATION

## ການເຄື່ອນໄຫວຂອງໂຄງການ

**ຜ່ານ** ການປະຕິບັດວຽກຢູ່ເຫດສະບານເມືອງຫລວງພະບາງ ເປັນເວລາ 3 ເດືອນ ພາຍໃຕ້ການຊີ້ນຳຢ່າງໃກ້ຊິດ ຈາກທ່ານ ດາລາ ກັນລະຍາ ຫົວໜ້າໂຄງການ ໄດ້ເຮັດໃຫ້ພະສົງສາມະເນນ ແລະ ຊາວບ້ານປ່າຂາມມີຄວາມເຂົ້າໃຈ ແລະ ເພິ່ງພໍໃຈຕໍ່ເອກະສານບູຮານຂອງຕົນຂຶ້ນຕື່ມ, ທ່ານອຸ່ນເຮືອນ ຈັນທະສັກ ນາຍບ້ານ ບ້ານປ່າຂາມ ເພິ່ນມີຄວາມເປັນກັນເອງ ແລະ ໃຫ້ຄວາມສະດວກສະບາຍທຸກຢ່າງ. ເຖິງວ່າ ຈະຈວບກັບປະເພນີການຊຳຣະບ້ານ ແຕ່ເພິ່ນກໍ່ໄດ້ລຸໂລ່ງໄດ້ເຂົ້າໃຈ ແລະ ມາຊົດຊ່ວຍອະນາໄມເຊັດຖູ ຈຶ່ງ ເຮັດໃຫ້ພິທີສະຫລຸບຢູ່ວັດໃໝ່ ສຸວັນນະພູມາຣາມ ມີແຂກຄົນມາຮ່ວມມາກໜ້າຫລາຍຕາ ເຕັມສິມວັດ. ໃນພິທີ ທ່ານ ນາງ ດາລາ ກັນລະຍາ ຫົວໜ້າໂຄງການ ແລະ ທ່ານ ຄຳຫລ້າ ພົມມະລາ ຫົວໜ້າ ພະແນກຖະແຫລງຂ່າວ ແລະ ວັດທະນະທຳ ແຂວງຫລວງພະບາງ ພັດປ່ຽນກັນກ່າວເຖິງ ຄວາມສຳຄັນຂອງໂຄງການ ກໍ່ຄື ການສຳຫລວດ ແລະ ປົກປັກຮັກສາຄຳພີໃບລານ, ໃຫ້ມີການຄົ້ນຄວ້າ ແລະ ນຳໃຊ້ໃຫ້ເກີດປະໂຫຍດແກ່ສັງຄົມຕໍ່ໄປ, ສາທຸອ່ອນແກ້ວ ເຈົ້າອາວາດໜຸ່ມ ຜູ້ທາວທັນແຫ່ງວັດປາກຄານ ພ້ອມທັງເປັນຄະນະສຶກສາສົງ ແຂວງ ຍັງໄດ້ສະແດງຄຳເຫັນທີ່ໜ້າຟັງຕື່ມ : "ບັນຫາ ການປົກປັກຮັກສາໃບລານຢູ່ແຕ່ລະວັດ ຍັງບໍ່ເປັນ ເອກະພາບກັນ, ບາງວັດກໍ່ຍັງຮັກສາໄວ້ຢ່າງແໜ້ນໜາ, ບາງວັດກໍເກັບມ້ຽນໄວ້ຢ່າງດຽວ ຂາດການກວດກາ, ຂາດການນຳໃຊ້, ບາງວັດ ໂດຍສະເພາະໃນເຂດຊົນນະບົດ ເຈົ້າອະທິການວັດຢູ່ບໍ່ເປັນ ປົກກະຕິ ອົງນີ້ມາຢູ່ແລ້ວ ກໍ່ຍ້າຍໄປ, ໃນການໄປກໍ່ເລືອກເອົາ ໜັງສືທີ່ອ່ານມ່ວນ ໂຕໜັງສືງາມໄປພ້ອມ ເຮັດໃຫ້ ໜັງສືຂາດຜູກ, ຂາດເລື່ອງ ເຊັ່ນ : ບາງເລື່ອງມີ 10 ຜູກ ບໍ່ເຫັນ 5 ຜູກກໍ່ມີ, 3 ຜູກກໍ່ມີ ເມື່ອຖາມພະສົງຜູ້ຮັບຜິດຊອບ ກໍບໍ່ຮູ້ຫຍັງ ເຮັດໃຫ້ການສຳຫລວດສັບສົນ ເພາະໜັງສື ຊອກບໍ່ເຫັນຕາມຈຳນວນ... ມາຮອດປັດຈຸບັນ ໂຄງການ ປົກປັກຮັກສານໜັງສືໃບລານ ໄດ້ເປັນແຮງດົນອັນ ມະຫາສານ ທີ່ເຮັດໃຫ້ພະສົງສາມະເນນ ແລະ ຊາວພຸດທະສາສະນິກກະຊົນ ໃນແຂວງຫລວງພະບາງ ຮູ້ຮັກ, ຮູ້ເອົາໃຈໃສ່ຖະໜອມສ້ອມ ແປງ..."

**ແຂວງໄຊຍະບູລີ** ອີງຕາມແຜນການເຄື່ອນໄຫວປີທີ II ຂອງໂຄງການ ຕົ້ນເດືອນກໍລະກົດ 1994, ຫົວໜ້າໂຄງການພ້ອມດ້ວຍ ຄະນະ ໜ່ວຍສຳຫລວດ ເດີນທາງໄປທີ່ແຂວງໄຊຍະບູລີ ດິນແດນທີ່ອຸດົມສົມບູນໄປດ້ວຍອູ່ເຂົ້າອູ່ປາ ແຫລ່ງນ້ຳ, ແຫລ່ງຊັບພະຍາກອນທຳມະຊາດ ຫລາຍຊະນິດ ໂດຍໄດ້ຮັບ ການຕ້ອນຮັບຢ່າງ

➡

### ເຊີນອ່ານ

✪ ນຳຮອຍໃບລານ ທີ່ໄຊຍະບູລີ
✪ ແຮງສັດທາ
✪ ໜ່ວຍຖ່າຍໄມໂຄຼຟິມ ເຄື່ອນໄຫວ ...
✪ ໂຕງ ໂຕຍຄວາມເວົ້າ
✪ ສະຖິຕິໜັງສືໃບລານ ...

ອົບຮົມ ແລະ ປະທັບໃຈຈາກ ທ່ານ ຄຳມ້າວ ກັນຍາວົງ ຮອງຫົວໜ້າພະແນກຖະແຫລງຂ່າວ ແລະ ວັດທະນະທຳ ແຂວງ ແລະ ຄະນະພັກ, ຄະນະປົກຄອງທຸກຂັ້ນ.

**ໃນພິທີເປີດບັ້ນສຳຫລວດຄັ້ງປະຫວັດສາດ ຢູ່ທີ່ ວັດສີບຸນເຮືອງ ບ້ານໃຫຍ່** ເຊິ່ງເປັນວັດມິ່ງບ້ານຂວັນເມືອງ ແລະ ສັກກາລະບູຊາຂອງຊາວເມືອງໄຊຍະບູລີ ໄດ້ມີການເຕົ້າໂຮມພະສົງສາມະເນນ, ຊາວບ້ານ ເຕັມສາລາວັດ ພາຍຫລັງທີ່ທ່ານຄຳມ້າວ ໄດ້ຊີ້ແຈງເຖິງຈຸດປະສົງໃນການ



*ຫົວໜ້າ ພະແນກຖະແຫລງຂ່າວ ແລະ ວັດທະນະທຳ ແຂວງ ຫລວງພະບາງ ພ້ອມຊາວບ້ານ ໃນມື້ ສະຫລຸບການສຳຫລວດ*

ເຕົ້າໂຮມ, ທ່ານ ນາງ ດາລາ ກັນລະຍາ ຫົວໜ້າ ໂຄງການ ແລະ ທ່ານ ບຸນຍົກ ແສນສູນທອນ ທີ່ປຶກສາໂຄງການ ພ້ອມທັງເປັນຫົວໜ້າໜ່ວຍສຳຫລວດ ໄດ້ພັດປ່ຽນກັນຂຶ້ນກ່າວເຖິງຈຸດປະສົງ ຄວາມສຳຄັນຂອງໂຄງການ ແລະ ວຽກງານທີ່ຈະຕ້ອງດຳເນີນການສຳຫລວດ ເພື່ອໃຫ້ຊາວບ້ານ ແລະ ທຸກຄົນໄດ້ເຂົ້າໃຈ. ຈາກນັ້ນ **ທ່ານ ເມກ ພັນລັດ ເຈົ້າເມືອງ ເມືອງໄຊຍະບູລີ** ໄດ້ກ່າວເນັ້ນຕື່ມວ່າ : "ຖືວ່າວຽກງານນີ້ກໍ່ແມ່ນການເຮັດບຸນອີກປາງບຸນໜຶ່ງ ເພາະວ່າໜັງສືໃບລານ ແມ່ນບັນພະບູລຸດຄູ ອາຈານ ໄດ້ຂີດຂຽນຄຳສັ່ງສອນຕ່າງໆ ບັນທຶກໄວ້ຫັ້ນ ມາແຕ່ບູຮານ, ຖ້າເຮົາຫາກບໍ່ກວດກາເບິ່ງ, ບໍ່ມາເຊັດ ບໍ່ມາພັດ ມັນກໍຈະສູດສ້ວຍ, ພວກເຮົາກໍ່ຈະລືມບຸນຄຸນ ຂອງບັນພະບູລຸດ... ເປັນໂອກາດດີ ທີ່ວິຊາການຂອງໂຄງການ ເພິ່ນໄດ້ມາຮອດ ມາເຖິງທ້ອງຖິ່ນ ຖ້າປະຊາຊົນເຮົາ ມີຫຍັງບໍ່ເຂົ້າໃຈໃຫ້ຖາມເພິ່ນ, ຮ່ຳຮຽນນຳເພິ່ນ... ນອກຈາກຫລັກທາງ ສາດສະໜາ ແລະ ການເທດ, ການສູດ ລຳສູດຂວັນ, ຄຳອວຍພອນຕ່າງໆ ທີ່ມ່ວນໆ ໃຫ້ຊອກຮູ້ນຳເພິ່ນ..."

ຈາກນັ້ນ ທາງເຖົ້າແກ່ແນວໂຮມ ກໍອາລາດທະນາເອົາໜັງສືລົງຈາກກະຕິ ເພື່ອມາອະນາໄມ, ທາງໂຄງການ ມີຄວາມປະທັບໃຈຫລາຍ ທີ່ບໍ່ສະເພາະແຕ່ທາງພະສົງ ແລະ ຊາວບ້ານ ສະແດງເຈດຈຳນົງ ຢາກຈະມາເຊັດມາຖູຊ່ວຍ, ແມ່ນກະທັ້ງ ທ່ານ ເມກ ພັນລັດ ເຈົ້າເມືອງ ເມືອງໄຊຍະບູລີ ກໍ່ມານຳເອົາໜັງສືໃບລານ ລົງຈາກກະຕິ ເພື່ອທຳການອະນາໄມເຊັດຖູ, ນີ້ສະແດງໃຫ້ເຫັນວ່າ ທາງອຳນາດການປົກຄອງຂັ້ນນຳ ຂອງແຂວງ ແລະ ຊາວບ້ານທຸກຄົນ ໄດ້ເຫັນຄວາມສຳຄັນ ຂອງການປົກປັກຮັກສາ ໜັງສືໃບລານ ສົມກັບຄວາມຄອງຄອຍ ດ້ວຍໃຈຈົດຈໍ່ອີ່ຫລີ.

ສະພາບເອກະສານຢູ່ວັດນີ້ ແມ່ນມີດແກກຜຸກ ເປັນສ່ວນຫລາຍ ຕາມການບອກເລົ່າຂອງຜູ້ເຖົ້າຜູ້ແກ່ ເພິ່ນກໍວ່າ : "ສະໄຫມກ່ອນ ວັດນີ້ເກີດມີໄຟໄໝ້ ຈຶ່ງເຮັດໃຫ້ເອກະສານ ແລະ ໜັງສືເສຍຫາຍຫລາຍ ອາດຈະບໍ່ສົມກັບວ່າ ເປັນວັດກົກວັດເຄົ້າ..." ບາງຄົນທີ່ເພິ່ນມີໜັງສືໃບລານ ຢູ່ຕາມບ້ານ, ຕາມເຮືອນກໍ່ນຳເອົາມາອະນາໄມ ແລະ ມາຂຶ້ນທະບຽນ ຈາກນັ້ນ ກໍ່ມອບໃຫ້ທາງວັດ ປົກປັກຮັກສາຕໍ່ໄປ.

ໃນພິທີສະຫລຸບ ຍິ່ງມີບັນຍາກາດສຶກຄຶ້ນ ເນື່ອງຈາກມີການເຂົ້າຮ່ວມຈາກຫລາຍພະແນກການ ເຊັ່ນ ຕາງໜ້າ

ຈາກພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງ ຈາກຊາວໜຸ່ມແຂວງ, ສຶກສາແຂວງ, ແນວໂຮມແຂວງ ທ່ານ ປໍຄຳ ຮອງຫົວໜ້າພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງໄຊຍະບູລີ ໄດ້ຕາງໜ້າ ອຳນາດການປົກຄອງແຂວງ ສະແດງຄຳເຫັນ : "ຄັ້ງນີ້ເປັນຄັ້ງປະຫວັດສາດ ທີ່ບໍ່ເຄີຍມີມາກ່ອນ ໃນແຂວງໄຊຍະບູລີ, ນີ້ແມ່ນນະໂຍບາຍອັນໜຶ່ງ, ແມ່ນແນວທາງຂອງພັກ ແລະ ລັດຖະບານເຮົາ ທີ່ມີການປົກປັກຮັກສາມໍລະດົກວັດທະນະທຳ ໂດຍສະເພາະໜັງສືໃບລານ ມໍລະດົກທາງພູມປັນຍາທີ່ມີຄຸນຄ່າ" ທາງຊາວບ້ານຍັງໄດ້ສະແດງລວດລາຍ ການຕີກອງ ໂຜ່ງ ແລະ ກອງທາງ ເສີມສ້າງບັນຍາກາດ ມື້ສະຫລຸບ ຄືກັບປາງບຸນໃຫຍ່.

ຈາກນັ້ນ ທາງໜ່ວຍໄດ້ເຄື່ອນຍ້າຍມາທີ່ **ວັດ ສີສະຫວ່າງ ບ້ານສີເມືອງ** ເຊິ່ງວັດນີ້ ຂຶ້ນຢູ່ກັບສາມບ້ານ ຄື **ບ້ານສີເມືອງ, ບ້ານຖິ່ນ ແລະ ບ້ານສີມຸງຄຸນ**, ປັດຈຸບັນເປັນສຳນັກຮຽນຂອງສົງ ໃນຊັ້ນມັດທະຍົມ, ທາງຍາທ່ານໃຫຍ່ ບຸນສີມມາ ເຈົ້າອາທິການວັດ, ຄະນະ ພ.ສ.ລ. ແຂວງ ໄດ້ນຳພາພະສົງສາມະເນນ ແລະ ອອກຕົນຍາດໂຍມ ອະນາໄມ, ເຊັດຖູ ມ້ຽນມັດເອກະສານໄວ້ຖ້າໂຄງການ ກ່ອນແລ້ວ ດັ່ງນັ້ນ ຂັ້ນຕອນການອະນາໄມເຊັດຖູ ຈຶ່ງໃຊ້ເວລາພຽງຄາບດຽວກໍສຳເລັດ, ແຕ່ທາງໜ່ວຍສຳຫລວດ ກໍຍັງຕ້ອງນຳເອົາເອກະສານເຫລົ່ານັ້ນ ມາສາທິດການອະນາໄມຄືນ ໃຫ້ຖືກຕາມຫລັກວິຊາການ ໃຫ້ແກ່ພະສົງ ແລະ ຊາວບ້ານໄດ້ ເຂົ້າໃຈຕື່ມ. ຍາທ່ານໃຫຍ່ ບຸນສີມມາ ໄດ້ສະແດງຄວາມຂອບໃຈ ທີ່ທາງໜ່ວຍສຳຫລວດ ໄດ້ແນະນຳ ແລະ ປະຕິບັດວຽກ ດ້ວຍຄວາມເອົາໃຈໃສ່ "ພວກເຮົາໄດ້ຄວາມຮູ້ຈາກທາງໜ່ວຍສຳຫລວດຫລາຍຢ່າງ ເຮັດໃຫ້ພວກເຮົາເຂົ້າໃຈຂຶ້ນຕື່ມ ໃນແຕ່ລະຂັ້ນຕອນ ອາດຕະມາເອງ ຈະນຳໃຊ້ວິທີເຫລົ່ານີ້ ເພື່ອຮັກສາເອກະສານເຫລົ່ານີ້ ແລະ ນຳໃຊ້ເຂົ້າໃນການສຶກສາຮ່ຳຮຽນ ໃຫ້ແກ່ພະສົງຕໍ່ໄປ..."

ໃນມື້ພິທີສະຫລຸບ ນອກຈາກມີການຕັກບາດ ການສະແດງຄຳເຫັນຂອງທ່ານ ດາລາ ກັນລະຍາ ຫົວໜ້າໂຄງການ, ທ່ານ ບຸນຍົກ ແສນສຸນທອນ ຫົວໜ້າໜ່ວຍສຳຫລວດ, **ທ່ານ ເພກ ພັນລັດ ເຈົ້າເມືອງ ເມືອງໄຊຍະບູລີ** ແລ້ວ ຍັງມີການລົບງັນດ້ວຍຕົນຕີພື້ນເມືອງ ຂັບທຸ້ມ ຫລວງພະບາງ ແລະ ອ່ານໜັງສືກາບກອນໄຊຍະບູລີ ຈາກຄະນະຕົນຕີຂອງແນວລາວສ້າງຊາດແຂວງ ແລະ ສິລະປະພາຍໃນບ້ານ.

ເຄື່ອນໄປ**ວັດແສນຕໍຄອນໃຈແກ້ວກວ້າງ ບ້ານນາຫລາ** ເຊິ່ງເປັນບ້ານຂອງຊົນເຜົ່າຍວນ ດັ່ງນັ້ນ ໜັງສືໃບລານ ຈຶ່ງເປັນໜັງສືທ້າຍວນທັງໝົດ ແຕ່ໜ້າເສຍດາຍ ມີພຽງສາມະເນນອົງດຽວ ເປັນຜູ້ດູແລ ຈຶ່ງເຮັດໃຫ້ໜັງສືທີ່ມີນ້ອຍຢູ່ນັ້ນ ແຕກມັດແຕກຜູກເປັນສ່ວນຫລາຍ ພໍແຕ່ໂຄງການ ລົງໄປນຳພາ ປຸກລະດົມພໍ່ແມ່ປະຊາຊົນ ໃຫ້ມາຮ່ວມມື ທຸກຄົນລ້ວນແຕ່ຍີນດີ ແລະ ເຫັນດີເຫັນພ້ອມກັບວຽກງານດັ່ງກ່າວຢ່າງສຸດໃຈ. ຢູ່ນີ້ຍັງມີການບັນທຶກ 12, ຄອງ 14,



*ພະອາຈານ ບຸນສີມມາ ເຈົ້າອາວາດວັດສີສະຫວ່າງ ເມືອງ ແລະ ແຂວງໄຊຍະບູລີ ພວມນຳພາການອະນາໄມໜັງສືໃບລານ.*

ວັດວາສາດສະໜາ ແລະ ໜັງສືໃບລານເປັນສິ່ງທີ່ສັກກາລະບູຊາ, ມີຄວາມນິຍົມ ຟັງຈ້ອຍ, ຊໍ່ຍວນ ດັ່ງນັ້ນ ຈຶ່ງມີນັກຈ້ອຍ, ນັກຊໍ່ ທັງ ອາວຸໂສ ແລະ ໜຸ່ມຫລາຍໆຄົນເຊັ່ນ : ໜານສຸພັນ ໜານອິນຫວັນ, ນາງ ແພງ, ນາງແສງເດືອນ, ໂດຍສະເພາະ ໜານສຸພັນ ຍັງເປັນ ນັກອ່ານໜັງສືຜູກ ທີ່ສຽງ ດີອີກ.



*ພິທີແຫ່ຄຳພີໃບລານ ທີ່ເມືອງປາກລາຍ*

ໃນເຂດ**ນາແລ້ງ, ວັງຫີນ** ແລະ **ນາຫ່ອນ** ເປັນເຂດຂອງຊົນເຜົ່າຍວນ ເປັນສ່ວນ ຫລາຍ ທີ່ຍັງຄົງນັບຖືວັດວາສາດສະໜາຢ່າງເຄັ່ງຄັດ ແຕ່ບາງ ວັດກໍ່ຂາດພະສົງດູແລ ເຊັ່ນ ຢູ່ວັດສີສະອາດ ບ້ານວັງຫີນ ໜັງສືໃບລານ ຈຶ່ງຢູ່ໃນສະພາບຊຸດໂຊມເປັນສ່ວນຫລາຍ. ເມື່ອທາງໂຄງການໄດ້ໄປນຳພາ ປົກປັກ ຮັກສາ ຊາວບ້ານ ທຸກຄົນພາກັນຍໍມືສາທຸ, ບາງຄົນ ກໍ່ເວົ້າຂຶ້ນວ່າ : "ຢາກໃຫ້ມາເລື້ອຍ ໆ."

ຫລັງຈາກທີ່ໂຄງການເຄື່ອນໄຫວຢູ່ເມືອງໄຊຍະບູລີ ໃນຈຳນວນ 17 ວັດ, ເນື່ອງຈາກເປັນໄລຍະ ລະດູຝົນ ເສັ້ນທາງຄົມມະນາຄົມຂອງແຕ່ລະທ້ອງຖິ່ນ ຍັງບໍ່ສະດວກ ພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງ ໄດ້ສະເໜີ ຄະນະໜ່ວຍສຳຫລວດ ລົງສຳຫລວດຢູ່ເຂດເມືອງປາກລາຍໂດຍທາງເຮືອ ເຊິ່ງໃນນີ້ **ທ່ານ ທອງສຸກ ໄຊຍະລາດ ຫົວໜ້າພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງ** ຕິດຕາມຢ່າງໃກ້ຊິດ ພ້ອມທັງເຮັດວຽກຊ່ວຍໜ່ວຍສຳຫລວດ ດ້ວຍຄວາມເອົາໃຈໃສ່, ຢູ່ນີ້ ທາງຄະນະໜ່ວຍສຳຫລວດ ໄດ້ສົມທົບກັບພະນັກງານ ຈາກພະແນກຖະແຫລງຂ່າວ ແລະ ວັດທະນະທຳເມືອງ 1 ທ່ານ ແລະ ພະນັກງານຈາກແນວໂຮມ 1 ທ່ານ ລົງສຳຫລວດໜັງສື ໃບລານໃນ 3 ວັດ. ສະພາບໜັງສືໃບລານມີໜ້ອຍ ແລະ ຍັງຢູ່ໃນສະພາບຊຸດໂຊມ. ຍ້ອນກ້ອນກຳລັງ ແລະ ສັດທາອັນແຮງກ້າ ເປັນພື້ນຖານຢູ່ແລ້ວ ເມື່ອມີການປຸກລະດົມ ຈາກໜ່ວຍສຳຫລວດນັບແຕ່ປະທານ ພ.ສ.ລ.ແຂວງ ພະສົງ ສາມະເນນ ພະນັກງານ ທຸກຂະແໜງ ການ ຊາວບ້ານ ນຳໂດຍ ເຈົ້າເມືອງເມືອງປາກລາຍ ທຸກຄົນ ມີຄວາມຫ້າວຫັນ ແລະ ຕື່ນຕົວຍິ່ງຂຶ້ນ ເຮັດໃຫ້ວຽກງານການສຳຫລວດ ຢູ່ ແຕ່ລະວັດປານປາງບຸນໃຫຍ່.

ປັດຈຸບັນ ປະຊາຊົນຢູ່ເມືອງບໍ່ແຕນ ແລະ ແກ່ນທ້າວ ຍັງຄອງຄອຍຢາກໃຫ້ໂຄງການໄດ້ໄປຮອດ ໄປເຖິງ ເພື່ອນຳພາການປົກປັກຮັກສາໜັງສືໃບລານທີ່ມີຢູ່ແລ້ວ, ບາງບ້ານກໍມີການອະນາໄມ ເຊັດຖູໄວ້ຖ້າ, ບາງບ້ານມີການສ້າງຫໍໄຕຂຶ້ນມາໃໝ່ ນີ້ເປັນແບບຢ່າງທີ່ໜ້າຊົມເຊີຍ ແລະ ເປັນກຳລັງໃຈໃຫ້ແກ່ໂຄງການ ທີ່ຈະເຮັດວຽກງານນີ້ສືບຕໍ່ໄປ.

ຖືວ່າ ວຽກງານການອະນຸລັກຟື້ນຟູໜັງສືໃບລານຢູ່ແຂວງໄຊຍະບູລີ ມີຄວາມຕື່ນຕົວ ແລະ ຟົດຟື້ນໄປທົ່ວທຸກແຫ່ງ ພ້ອມກັບມີການຟື້ນຟູ ວັດທະນະທຳ ທີ່ເກົ່າແກ່ ເຊັ່ນ : ຄົບຕີພື້ນເມືອງ, ຂັບລຳທ້ອງຖິ່ນ, ນັກເທດ, ນັກສູດ.

ມາໃນຕົ້ນເດືອນກັນຍາ ຄະນະໜ່ວຍສຳຫລວດໄດ້ເດີນທາງກັບຄືນມາທີ່ເມືອງຫລວງພະບາງ ເພື່ອສືບຕໍ່ການສຳຫລວດ ແລະ ປັດຈຸບັນ ພວມເຄື່ອນໄຫວຢູ່ວັດຊຽງທອງ ເຊິ່ງເປັນວັດເກົ່າແກ່ ແລະ ມີຊື່ສຽງອີກວັດໜຶ່ງຂອງແຂວງຫລວງພະບາງ.

# " ຄົງໃບລານ ຄົງປັນຍາ "

( ຄັດຈາກບົດປະກອບຄຳເຫັນ ຂອງ **ພະອາຈານ ສຳລິດ ສຸກສົມຫວັງ** ຄະນະ ພ.ສ.ລ. ສູນກາງ ຕໍ່ກອງປະຊຸມສຳມະນາ ວຽກງານການປົກປັກຮັກສາໜັງສືໃບລານລາວ ທີ່ແຂວງຫລວງພະບາງ ແຕ່ວັນທີ 1-3 ເມສາ 1994 )

**ໜັງສືທຳໃບລານແມ່ນມໍລະດົກ ອັນລ້ຳຄ່າທີ່ສຸດ ມັນເກີດຈາກແຮງງານ, ປັນຍາ, ມັນສະໝອງຂອງບັນພະບູລຸດ ແລະ ນັກປາດອາຈານ ທີ່ໄດ້ຂີດຂຽນໄວ້ ແລະ ຈາລຶກຫລາຍຮ້ອຍປີທີ່ຜ່ານມາ ຈົນເຖິງປັດຈຸບັນ** ເຊິ່ງເປັນວັດທະນະທຳລັກສະນະປະຫວັດສາດ, ລັກສະນະຊາດ ແລະ ມະຫາຊົນ ສ່ວນຫລາຍກໍ່ຈະຢູ່ພາຍໃຕ້ທຳມະວິໄນຄຳສັ່ງ ສອນຂອງອົງສຳມາສຳພຸດທະເຈົ້າ ເຊັ່ນ: ພະໄຕປິດົກ ມີ 3 ໝວດ ຄື: ພະສູດ, ພະວິໄນ ແລະ ພະອະພິທຳ ແລະ ໜັງສືອື່ນໆ ທີ່ບໍ່ຈັດເຂົ້າໃນພະໄຕປິດົກ ທີ່ຂຽນເປັນຕົວທຳ, ຕົວຂອມ ແລະ ພາສາອື່ນໆ ເນື້ອໃນສ່ວນຫລາຍ ເພິ່ນແນໃສ່ເພື່ອສັ່ງສອນ ຊີວິດສັງຄົມ, ໃນສັງຄົມຈະຕ້ອງຮູ້ເຖິງຄຳສັ່ງ ແລະ ຄຳສອນໂດຍທາງກົງ ແລະ ທາງອ້ອມ, ທາງເລິກ ແລະ ທາງຕື້ນ ຄຳສອນທາງສາດສະໜາ ໃນໜັງສືໃບລານ ແມ່ນດີທີ່ສຸດ ເນື່ອງຈາກວ່າ ເພິ່ນໄດ້ຈັດເປັນລະບົບໄວ້ ລັກແນ່ ໂດຍອີງໃສ່ລະດັບຄວາມຮັບຮູ້ຂອງຄົນ, ນອກຈາກ ການອ່ານ, ການຟັງ ທີ່ເປັນລັກສະນະຮ້ອຍແກ້ວ ແລະ ຮ້ອຍກອງແລ້ວ, ເພິ່ນຍັງປະກອບຮູບພາບ ໃຫ້ຄົນໄດ້ເບິ່ງ ນຳອີກ ເຊັ່ນ: ເລື່ອງນາລົກ, ເລື່ອງສະຫວັນ, ເລື່ອງພະເຫວດ ສື່ການຊີ້ແຈງເຖິງຄວາມດີ-ຄວາມຊົ່ວ, ຄວາມອົດທົນ ກັບຄວາມເສຍສະຫລະ ເພື່ອສັງຄົມ, ເລື່ອງ ພະລັກພະລາມ ເຊິ່ງເນື້ອໃນເວົ້າເຖິງການເມືອງ ແລະ ມະຫາສົງຄາມ ອັນຍິ່ງໃຫຍ່ ໃນການຕໍ່ສູ້ ລະຫວ່າງທຳມະກັບ ອະທຳ ວ່າໃຜຊະນະໃຜ, ນອກຈາກນັ້ນ ກໍ່ມີເລື່ອງອື່ນໆອີກ ທີ່ເພິ່ນໄດ້ແຕ່ງໄວ້ໃຫ້ພວກເຮົາທັງຫລາຍ ລ້ວນແຕ່ແມ່ນ ປັນຍາຊົນ ໄດ້ມອງກວ້າງເຫັນໄກ ຈາກການອ່ານ, ການຄິດ ແລະ ການນຳໃຊ້ປະຕິບັດຕົວຈິງ ທີ່ບໍ່ມີຄວາມປະມາດ ໃນໜັງສືໃບລານ ກໍ່ໃຫ້ລູກຫລານເຮົາກໍ່ຈະກັບກາຍເປັນຄົນດີ ໃຫ້ແກ່ປະເທດຊາດ ແລະ ພຸດທະສາດສະໜາ, ກົງກັນຂ້າມ ຖ້າບຸກຄົນໃດບໍ່ຮູ້ເນື້ອໃນຂອງໜັງສືໃບລານ ວ່າມັນບົ່ງບອກຫຍັງແດ່ ? ແລ້ວໄປດູໝິ່ນປະໝາດວ່າ ການອ່ານໜັງສືໃບລານ ເປັນການຫລ້າຫລັງ ຫລືວ່າງົມງວາຍ ສະແດງວ່າ ບຸກຄົນນັ້ນຍັງບໍ່ທັນຮັບຮູ້, ຍັງມືດ ແລະ ງົມງວາຍຢູ່.



ມີນັກປາດອາຈານ ເຄີຍໄດ້ເຕືອນພວກເຮົາວ່າ ຖ້າພວກເຮົາຢາກໄດ້ປື້ມຕຳລາ ຫລື ໜັງສືຜູກໃບລານທີ່ດີເຊິ່ງມັນມີຢູ່ໃນຫ້ອງ, ຢູ່ໃນຕູ້ ຫລື ຢູ່ໃນຄຳພີແລ້ວ ເຮົາຈະຕ້ອງຊອກຮູ້, ຄົ້ນຄວ້າ, ເອົາອອກມາອ່ານເບິ່ງ ແລ້ວຮູ້ຈັກຖະນຸຖະໜອມດ້ວຍຄວາມເຄົາລົບ, ຮູ້ຈັກເກັບຮັກສາໄວ້ຢ່າງດີ ເຮົາຈຶ່ງສາມາດຮູ້ໄດ້ວ່າ ຕຳລາແຕ່ລະເຫລັ້ມ, ແຕ່ລະຜູກ ໄດ້ບົ່ງບອກໃຫ້ພວກເຮົາຮູ້ຫຍັງແດ່ ? ແລະ ມີຄຸນຄ່າເຖິງຂະໜາດໃດ ?

ສໍາລັບພາສາ ແລະ ຕົວອັກສອນທຸກຊະນິດ ມັນບໍ່ເປັນສັດຕູແກ່ໃຜ ຖ້າເຮົາຫາກບໍ່ເວົ້າ ແລະ ຂຽນຜິດ ຫລື ທໍາທຸດຈະລິດ ໃນທາງບໍ່ຖືກຕ້ອງ, ມັນຈະເປັນຄຸນປະໂຫຍດສໍາລັບນັກອ່ານ, ນັກຄົ້ນຄວ້າ ແລະ ນັກປະຕິບັດທັງນັ້ນ, ສະນັ້ນ ກ່ອນພວກເຮົາຈະກ້າວເຂົ້າສູ່ສະຫນາມຮົບທາງດ້ານວັດທະນະທໍາ ກັບການສຶກສານັ້ນ ກ່ອນອື່ນຫມົດຈະຕ້ອງໄດ້ຊອກຫາຂໍ້ມູນ, ຈະຕ້ອງໄດ້ກະກຽມຊອກຮູ້, ຄົ້ນຄວ້າເພື່ອເຝິກສະຫມອງລອງປັນຍາ ນໍາເອົາວິຊານັ້ນເປັນອາວຸດ ຍຸດທະສາດພວກເຮົາຈຶ່ງສາມາດຜ່ານພົ້ນໄປ, ມະຫາວິທະຍາໄລບໍ່ພຽງແຕ່ຢູ່ໃນສໍານັກເທົ່ານັ້ນ, ມະຫາວິທະຍາໄລຍ່ອມຢູ່ທົ່ວທຸກບ່ອນ ແລະ ລີ້ຊ້ອນຢູ່ໃນກະໂຕຂອງບຸກຄົນ ແລະ ຢູ່ໃນປຶ້ມຕໍາລາຫລາຍໆເຫລັ້ມ ຖ້າພວກເຮົາຫາກຊ່າງຊອກຮູ້ ແລະ ຄົ້ນຄວ້ານັ້ນ ກໍ່ຄືມະຫາວິທະຍາໄລຂອງມະຫາຊົນ.

ດ້ວຍການຮ່ວມມືຈາກລັດຖະບານ ສ.ສ.ຢ. ທາງກະຊວງຖະແຫລງຂ່າວ ແລະ ວັດທະນະທໍາ ໂດຍສະເພາະແມ່ນຄະນະຮັບຜິດຊອບໂຄງການປົກປັກຮັກສາຫນັງສືໃບລານ ກໍ່ໄດ້ພາກັນລົງສໍາຫລວດຕົວຈິງ ເຫັນວ່າມີບົດຮຽນ ແລະ ເປັນຫນ້າປະທັບໃຈສໍາລັບພະສົງ ແລະ ປະຊາຊົນ ເຊັ່ນ : ນັກສໍາຫລວດ ໄດ້ພາກັນອະນາໄມ, ໄຈ້ແຍກ ຈັດຫມວດຫມູ່ລະອຽດ, ໃສ່ສາຍສະຫນອງ, ໄມ້ປະກັບ ຂຶ້ນບັນຊີຕົວເລກ ແລ້ວເກັບມ້ຽນໄວ້ໃນຕູ້ ເພື່ອປ້ອງກັນບໍ່ໃຫ້ມີແມງໄມ້ກັດ, ປ້ອງກັນຄວາມເປື້ອນ ສະດວກໃນການຄົ້ນຄວ້ານໍາໃຊ້ ໃນແຕ່ລະປະເພດຂອງຫນັງສືໃຫ້ໄດ້ຕາມຄວາມຕ້ອງການ ໃນການຄົ້ນຄວ້າສຶກສາຕໍ່ໄປ ນັ້ນເປັນການດີທີ່ສຸດ ເພາະມັນໄດ້ສະແດງເຖິງຄວາມຮັບຮູ້ ແລະ ນໍ້າໃຈຮັບຜິດຊອບຕໍ່ຄຸນຄ່າຄໍາສອນ ແລະ ຜົນປະໂຫຍດອັນແທ້ຈິງຫລາຍ ດ້ານວັດທະນະທໍາທີ່ຈະໄດ້ຖ່າຍທອດອອກມາເປັນຄວາມຮູ້ໃຫ້ແກ່ພະສົງ ຕະຫລອດເຖິງລູກຫລານທົ່ວໄປ.



## ຜະຫຍາຍ່ອຍ

"ສັງມາອຸກໃຈເດ້ ຄວາຍຫລາຍໂຕດຶງຈ່ອງ
ໂຕຫນຶ່ງຂ້ອງງ່າຄອງ ໂຕສອງຂ້ອງງ່າຂາມ
ໂຕສາມຂ້ອງງ່ານັ້ນ ໂຕສີ່ຂ້ອງງ່າຫວ້າ
ໂຕຫ້າຂ້ອງງ່າບົກ ໂຕຫົກຂ້ອງງ່າແຕ້
ໃຜຊິມາຊ່ວຍແກ້ ຄວາຍຂ້ອຍຈຶ່ງຊິໄປ

ເກັບກໍາໂດຍ : **ລານກ້ອມ**

# ນຳຮອຍໃບລານ... ທີ່ ແຂວງໄຊຍະບູລີ

ແຂວງໄຊຍະບູລີ ຕັ້ງຢູ່ຝັ່ງຂວາຂອງແມ່ນ້ຳຂອງ, ຊາຍແດນທິດຕາເວັນອອກ ຕິດກັບແຂວງຫລວງພະບາງ ແລະ ແຂວງວຽງຈັນ ໂດຍມີແມ່ນ້ຳຂອງຂັ້ນກາງ, ທິດເຫນືອ ຕິດກັບເຂດພິເສດ ຊຽງຮ່ອນ - ຫົງສາ ແລະ ເມືອງຈອມເພັດ ແຂວງຫລວງພະບາງ ທິດໃຕ້ ແລະ ທິດຕາເວັນຕົກ ຕິດກັບ ລາຊະອານາຈັກໄທ ທົ່ວແຂວງມີເນື້ອທີ່ທັງຫມົດ 11.795 ກມ² ສະເລ່ຍຄວາມຫນາແຫນ້ນພົນລະເມືອງ 17 ຄົນໃດຕໍ່ ຕາລາງກິໂລແມັດ, ແຂວງໄຊຍະບູລີປະກອບດ້ວຍ 5 ເມືອງ ຄື : ເມືອງໄຊຍະບູລີ, ເມືອງພຽງ, ເມືອງປາກລາຍ, ເມືອງບໍ່ແຕນ ແລະ ເມືອງແກ່ນທ້າວ ມີ 360 ບ້ານ, ມີ 32.704 ຄອບຄົວ, ມີພົນລະເມືອງ 200.500 ຄົນ ຍິງ 102.260 ຄົນ.

ດິນແດນແຫ່ງນີ້ ມີປະຫວັດສາດອັນເກົ່າແກ່ມາດົນ ນານ ປະກົດໃຫ້ເຫັນໄດ້ ຈາກຫລັກຖານທາງດ້ານຮ່ອງຮອຍ ວັດທະນະທຳ ອັນເກົ່າແກ່ຫລາຍແຫ່ງ ເຊັ່ນ : ສະຖານບູຮານ ແລະ ວັດຖຸບູຮານ ຢູ່ດອນຮອນ, ທາດບາງສານເປືອ ຢູ່ເມືອງປາກ ລາຍ, ສະຖານບູຮານ ເມືອງປັນຈະ ນະຄອນ, ພະຊຽງຍືນ ຢູ່ເມືອງແກ່ນ ທ້າວ ຫໍໄຕວັດໂພແທ່ນ, ຫໍໄຕວັດ ນາກ່າວ ເມືອງບໍ່ແຕນ, ສະຖານ ບູຮານບ້ານນາຄານ ເມືອງໄຊຍະບູລີ ແລະ ແຫ່ງອື່ນໆ ທີ່ຍັງຢືນໃຫ້ເຫັນ ເຖິງປະຊາຊົນ ແຂວງໄຊຍະບູລີ ໄດ້ມີແຮງສັດທາ ໃນການສືບທອດ ສິລະປະ-ວັດທະນະທຳ ໂດຍສະເພາະ ວັດທະນະທຳ ດ້ານຕົວຫນັງສືທຳ ທີ່ຍັງມີຊີວິດຊີວາມາຮອດປັດຈຸບັນ.

ແຕ່ໃດໆມາ ປະຊາຊົນແຂວງໄຊຍະບູລີ ໄດ້ມີການ ປົກປັກຮັກສາຫນັງສືໃບລານເປັນຢ່າງດີ ໂດຍອີງຕາມ ຄວາມເຂົ້າໃຈ ແລະ ຄວາມອາດສາມາດຂອງເຂົາເຈົ້າ ດ້ວຍສັດທາອັນແຮງກ້າ ຢູ່ບາງບ່ອນໄດ້ມີການປຸກສ້າງ ຫໍໄຕຂຶ້ນ ເຊັ່ນ : ຢູ່ວັດໂພແທ່ນ ເມືອງບໍ່ແຕນ. ຫໍໄຕຫລັງນີ້ ປະກອບດ້ວຍ 6 ເສົາ ເຊິ່ງເປັນໄມ້ຄູ່ເພີ່ມເຕີມຄວາມງາມ ດ້ວຍລວດລາຍບູຮານ, ສູງປະມານ 5 ແມັດ, ພື້ນແປ້ນ, ຝາແປ້ນ ມຸງແປ້ນ, ປະດັບດ້ວຍ ລວດລາຍສິລະປະແບບທາ ເບິ່ງໄດ້ຍາກ, ຕັ້ງສະຫງ່າຢູ່ກາງຫນອງສະນ້ອຍ ຢູ່ຂ້າງໃນ ຍັງບັນຈຸຕູ້ຄຳພີ 5 ຫນ່ວຍ, ໃນນັ້ນ 3 ຫນ່ວຍ, ແຕ້ມດ້ວຍ ລວດລາຍລະອຽດອ່ອນ ພອກດ້ວຍສີນ້ຳຄຳ, ຫນຶ່ງຫນ່ວຍ ເຮັດດ້ວຍ ລວດລາຍແກະສະຫລັກພອກດ້ວຍສີນ້ຳຄຳ ອາຍຸສະເລ່ຍແລ້ວ ປະມານ 200 ກວ່າປີ.

ທົ່ວແຂວງໄຊຍະບູລີ ມີວັດທັງຫມົດ 208 ແຫ່ງ. ໃນນັ້ນ ວັດທີ່ມີພະສົງ 123 ແຫ່ງ, ຍັງມີການສຶກສາຮ່ຳຮຽນພະສູດ ພະທຳຈາກຫນັງສືໃບລານ. ຢູ່ໃນປະເພນີພິທີກຳຕ່າງໆ ເຊັ່ນ : ງັນເຮືອນດີ ກໍ່ຍັງມີການອ່ານ, ການສູດຈາກອ້າຍທິດ, ອ້າຍຈານ ແລະ ຜູ້ເຄີຍບວດເຄີຍຮຽນ.

ເມື່ອກ່ອນການປົກປັກຮັກສາຫນັງສືໃບລານ, ພະທຳ ຄຳສັ່ງສອນຕ່າງໆ ຖືວ່າເປັນພາລະຫນ້າທີ່ ຂອງພະສົງ ສາມະເນນແຕ່ຝ່າຍດຽວ. ບາງຍຸກບາງສະໄຫມ ສະພາບ



ຫໍໄຕວັດໂພແທ່ນ ເມືອງບໍ່ແຕນ

ການບ້ານເມືອງຕົກຢູ່ໃນສະພາວະສົງຄາມ, ປະສົບໄພທຳມະຊາດ, ຫນັງສືໃບລານບາງບ່ອນພັດຖືກໄຟໄຫ້, ຖືກປວດກັດ, ມອດເຈາະ, ຝົນຮົ່ວໃສ່ ເຮັດໃຫ້ເອກະສານທີ່ມີຢູ່ຢ່າງຫລວງຫລາຍຕ້ອງສູນເສຍໄປ ເປັນຈຳນວນບໍ່ຫນ້ອຍ.

ພາຍຫລັງທີ່ໂຄງການປົກປັກຮັກສາຫນັງສືໃບລານລາວ ໄດ້ມີການລົງສຳຫລວດ, ປົກປັກຮັກສາ ພ້ອມໆກັບມີການເຜີຍແຜ່ປຸກລະດົມ ໃຫ້ທຸກຄົນ ເຫັນຄວາມສຳຄັນຂອງເອກະສານບູຮານ, ສິ່ງດັ່ງກ່າວ ກາຍເປັນແຮງດົນອັນມະຫາສານ ເຮັດໃຫ້ອຳນາດການປົກຄອງທຸກຂັ້ນ, ພະສົງສາມະເນນ ຕະຫລອດຮອດຊາວບ້ານໃນແຕ່ລະທ້ອງຖິ່ນ ຕ່າງກໍ່ມີຄວາມຕື່ນຕົວ, ເປັນຫ່ວງເປັນໃຍນຳຊະຕາກຳ ຂອງຫນັງສືເທດ ຫນັງສືສູດ, ຕື່ນຕົວທີ່ຈະຢາກຮູ້ຢາກຮຽນ ແລະ ຮູ້ເອົາໃຈໃສ່ອະນຸລັກຮັກສາຫລາຍຂຶ້ນ.

ໂດຍປະຕິບັດຕາມແຜນການປີທີ II ຂອງໂຄງການທີ່ລົງເຄື່ອນໄຫວຢູ່ແຂວງຫລວງພະບາງ, ໄຊຍະບຸລີ ອຸດົມໄຊ ແລະ ເຂດພິເສດຊຽງຮ່ອນຫົງສາ, ພາຍຫລັງທີ່ໂຄງການໄດ້ເຄື່ອນໄຫວຢູ່ເທດສະບານ ເມືອງຫລວງພະບາງ ເປັນເວລາ 3 ເດືອນ, ເລີ່ມແຕ່ຕົ້ນເດືອນກໍລະກົດ 1994 ໂຄງການໄດ້ເຄື່ອນໄຫວສຳຫລວດຢູ່ເມືອງໄຊຍະບຸລີ ແລະ ເມືອງປາກລາຍ ຕາມຄວາມເຫັນດີຂອງພະແນກຖະແຫລງຂ່າວ ແລະ ວັດທະນະທຳແຂວງ ເປັນເວລາ 2 ເດືອນ ດ້ວຍງົບປະມານ 1.118.600 ກີບ.

ໃນການລົງເຄື່ອນໄຫວຕົວຈິງຢູ່ໃນແຕ່ລະວັດ. ແຕ່ລະທ້ອງຖິ່ນ ໄດ້ຮັບການຮ່ວມມືຮ່ວມໃຈຈາກມວນຊົນ ໃນທ້ອງຖິ່ນ ຕະຫລອດຮອດອຳນາດການປົກຄອງໃນແຕ່ລະຂັ້ນ, ພະແນກການຕ່າງໆ ພາຍໃນແຂວງ ຊ່ວຍໃຫ້ບັນຍາກາດຂອງການສຳຫລວດມີຄວາມຟົດຟື້ນ ປານກັບປາງບຸນໃຫຍ່, ວຽກງານດັ່ງກ່າວ ເຮັດໃຫ້ທຸກຄົນຮັບຮູ້ ແລະ ເຂົ້າໃຈເຖິງຄຸນຄ່າຂອງເອກະສານ, ນອກນັ້ນ ຊາວບ້ານກໍ່ໄດ້ພົບກັບບັນຍາກາດອັນໃຫມ່ ໃນການຟື້ນຟູວັດວາສາດສະຫນາ, ດົນຕີພື້ນເມືອງ, ຂັບລຳທ້ອງຖິ່ນ, ນັກເທດ ນັກສູດ.

ໂຄງການປົກປັກຮັກສາຫນັງສືໃບລານ ໄດ້ຢັ້ງຢືນໃຫ້ເຫັນວ່າ ປະຊາຊົນແຂວງໄຊຍະບູລີ ຍັງຄົງຮັກຫອມ ແລະຫວງແຫນຕໍ່ວັດທະນະທຳ ທາງຕົວຫນັງສືທຳປີ້ຢູ່, ໂຄງການຍັງໄດ້ສ້າງໂອກາດໃຫ້ຊາວບ້ານ, ຍິງຫນຸ່ມ ຊາວຫນຸ່ມ ຕະຫລອດຮອດນ້ອງນ້ອຍເຍົາວະຊົນ ມາເຕົ້າໂຮມກັນຮ່ວມມືກັບນັກວິຊາການ ຫລັງຈາກໄດ້ໄປປະກອບອາຊີບວຽກໄຮ່ການນາມາແລ້ວ ກໍ່ຍັງມາສືບຕໍ່ເຄື່ອນໄຫວວຽກວັດທະນະທຳ ຮ່ວມກັນ ຢ່າງຄຶກຄື້ນ.



ພວກເຮົາມີຄວາມພູມໃຈ ຢ່າງຍິ່ງ ທີ່ປະຊາຊົນ ແລະອຳນາດການປົກຄອງທຸກຂັ້ນ ຂອງແຂວງໄຊຍະບູລີ ໄດ້ ເຂົ້າໃຈ ແລະ ເຫັນຄວາມສຳຄັນ ໃນການປົກປັກຮັກສາມໍລະດົກເຫລົ່ານີ້ ເຂົາເຈົ້າ ຈະເປັນເຈົ້າການ ໃນການປົກປັກ ຮັກສາວັດທະນະທຳ ທາງຕົວທຳ ນີ້ສືບຕໍ່ໄປ.

# ແຮງສັດທາ

ຈານ ພູມີເດດ
ແນວໂຮມ ບ້ານສີບຸນເຮືອງ ເມືອງ ແລະ ແຂວງໄຊຍະບູລີ

ຕັ້ງແຕ່ໃດໆມາ ຍັງບໍ່ເຄີຍມີການນຳພາການອະນຸລັກ ຮັກສາຫນັງສືໃບລານທີ່ລະອຽດ ແລະ ລົງສູ່ຮາກຖານ ຄືແນວນີ້, ແມ່ນແຕ່ຫລັບຜູ້ຂ້າກໍ່ບໍ່ເຄີຍຝັນວ່າ ຈະມີ ໂຄງການມາຊ່ວຍເຫລືອ ເພື່ອປົກປັກຮັກສາ ສິ່ງທີ່ພວກເຮົາ ສັດທາ ແລະ ເຄົາລົບນັບຖືມາແຕ່ບູຮານນະການ.



ທ່ານທອງສຸກ ໄຊຍະລາດ(ຊ້າຍມື) ແລະ ທ່ານ ບຸນຍົກ ແສນສູນທອນພົບປະຊາວບ້ານ ຢູ່ເມືອງປາກລາຍ

ເມື່ອທັງສອງກ້ຳສອງຝ່າຍ ຄື : ທາງຝ່າຍໂຄງການ ແລະ ຝ່າຍທ້ອງຖິ່ນ ມາຮ່ວມຊ່ວຍກັນຄົ້ນຄວ້າ ອະນາໄມເຊັດຖູ ໃຫ້ສະອາດ, ໄຈ້ແຍກຈັດຫມວດຫມູ່ ກໍ່ຄືແຕ່ລະຂັ້ນຕອນທີ່ມີຄວາມຫຍຸ້ງຍາກຫລາຍຢ່າງ ແລະ ພວກເຮົາ ກໍ່ມາພົບຫນັງສືທີ່ເປັນວັນນະຄະດີ ທີ່ຫມູນໃຊ້ຢູ່ໃນສາດສະຫນາ, ຊາດົກຕ່າງໆ... ຖ້າບໍ່ມີ ການຄົ້ນຄືນ ປະຊາຊົນພວກເຮົາ ແລະ ພະສົງພາຍໃນວັດ ກໍ່ບໍ່ຮູ້ວ່າ ຢູ່ໃນຫນັງສືໃບລານມີຫຍັງແດ່ ? ມີຄຸນຄ່າ ຫລາຍນ້ອຍຊ່ຳໃດ ?

ຢູ່ວັດຂອງພວກເຮົາ ມີຫນັງສືພຽງເລັກນ້ອຍ ບໍ່ຄ່ອຍສົມວ່າ ເປັນວັດກົກວັດເຄົ້າຂອງແຂວງ, ເນື່ອງຈາກວ່າເຄີຍເກີດອຸບັດຕິເຫດໃນໄລຍະຫນຶ່ງ ຄືເກີດໄຟໃຫມ້ກຸດຕິດັ່ງນັ້ນ ຫນັງສືຈຶ່ງເສຍຫາຍໄປຫລາຍ, ດ້ວຍແຮງສັດທາຂອງລູກຫລານ ຕໍ່ມາຈຶ່ງໄດ້ມີນັກປາດອາຈານ ຜູ້ມີຄວາມຮູ້, ຄວາມສາມາດ ພາກັນອົດຂຽນ ເກັບເລັກເກັບນ້ອຍຈຶ່ງມີຫນັງສືເຫລືອມາຮອດປັດຈຸບັນ ເຖິງວ່າຈະມີນ້ອຍແຕ່ກໍ່ມີຄຸນຄ່າສຳລັບພວກເຮົາ ຊາວໄຊຍະບູລີ.

ດ້ວຍແຮງສັດທາ ຂອງປະຊາຊົນ ແລະ ພະສົງພວກເຮົາຈະຮັບພາລະຫນ້າທີ່ ປົກປັກຮັກສານີ້ສືບຕໍ່ໄປຜູ້ຂ້າຕາງຫນ້າປະຊາຊົນພາຍໃນແຂວງ ຂໍຂອບໃຈ ຕໍ່ ໂຄງການປົກປັກຮັກສາຫນັງສືໃບລານ ທີ່ໄດ້ມີ ເຈດຕະນາອັນແຮງກ້າ ເສຍສະຫລະເວລາອັນມີຄຸນຄ່າ ມາຈາກສູນກາງ ແລະ ໄດ້ທ້ອນໂຮມຈິດໃຈ ຂອງຫລາຍ ຊີວິດມາຮ່ວມຊ່ວຍ, ແນະນຳ, ນຳພາ ວຽກງານອະນຸລັກມໍລະດົກ ທີ່ມີຄຸນຄ່າຂອງພວກເຮົານີ້ ຍິ່ງມີຄຸນຄ່າຂຶ້ນຕື່ມ.

ສິ່ງດັ່ງກ່າວຊຸກຍູ້ໃຫ້ພວກເຮົາມີຄວາມຮູ້ສຶກ ຫວງແຫນຕື່ນຕົວ ແລະ ຢາກຮູ້ຢາກຮຽນຫລາຍຂຶ້ນ.

# ຫນ່ວຍຖ່າຍໄມໂຄຣຟິມ ເຄື່ອນໄຫວ...

ການຖ່າຍໄມໂຄຣຟິມ ນັບວ່າເປັນວິທະຍາການ ສະໄຫມໃຫມ່ ທີ່ມີຄຸນຄ່າສູງ ກ່ຽວກັບການອະນຸລັກຫນັງສືໃບລານ ຍ້ອນວ່າ ການຖ່າຍໄມໂຄຣຟິມ ກໍ່ຄື ການຖ່າຍຮູບເອົາໄວ້ ຄື ກັບວ່າ ເຮົາໄດ້ສ້າງຕົ້ນສະບັບມາອີກສະບັບຫນຶ່ງ ເຊິ່ງຈະມີຊີວິດທີ່ຍືນຍາວ.

ການຖ່າຍໄມໂຄຣຟິມ ມີຄວາມສຳຄັນຫລາຍ ໃນການບັນທຶກຂໍ້ມູນຈາກຕົ້ນສະບັບຈິງ, ສະດວກສະບາຍໃນການຄົ້ນຄວ້າ ເພາະຕົ້ນສະບັບຈະບໍ່ຢູ່ກະຈັດກະຈາຍຄືແຕ່ກ່ອນ ເຊິ່ງເຮົາຈະມີສຳເນົາເປັນໄມໂຄຣຟິມອອກມາ ແລະ ເຮົາຈະສາມາດສຶກສາຂໍ້ມູນຕ່າງໆ ຈາກໄມໂຄຣຟິມ ໂດຍທີ່ບໍ່ຕ້ອງເດີນທາງໄປໄກ ຫລື ໃນກໍລະນີຕົ້ນສະບັບແທ້ ອາດຈະເກີດໄຟໄຫມ້ ຫລື ເສຍຫາຍໄປ ເຮົາກໍ່ສາມາດເກັບກຳຂໍ້ມູນໄດ້ ເນື່ອງຈາກເຮົາຖ່າຍໄມໂຄຣຟິມ ເອົາໄວ້ແລ້ວ.



ການອະນາໄມ ກ່ອນຖ່າຍໄມໂຄຣຟິມ

ພາຍຫລັງທີ່ຫນ່ວຍໄມໂຄຣຟິມ ລົງເຄື່ອນໄຫວຢູ່ວັດນາຊອນໃຕ້ ເປັນເວລາເດືອນກວ່າ, ວັນ ທີ 2 ສິງຫາ 1994 ທາງຫນ່ວຍກໍ່ເຄື່ອນຍ້າຍມາທີ່ບ້ານຜ້າວ, ຫ່າງຈາກຕົວເມືອງ ປະມານ 62 ກິໂລແມັດ ຕັ້ງຢູ່ສອງ ຟາກທາງ, ເບື້ອງຫນຶ່ງຕິດກັບແຄມຝັ່ງນ້ຳງື່ມຕອນໃຕ້, ຫນ່ວຍຖ່າຍໄມໂຄຣຟິມ ໄດ້ມາຕັ້ງຈຸດຖ່າຍຢູ່ວັດບ້ານຜ້າວໃຕ້ ເນື່ອງຈາກວັດນີ້ ມີຫນັງສືຫລາຍກວ່າ ວັດບ້ານຜ້າວເຫນືອ ໃນການລົງມືຖ່າຍຕົວຈິງ ເຫັນວ່າມີຫນັງສືເຖິງ 3 ເລື່ອງ ເປັນຈຳນວນ 9 ຜູກ ທີ່ຊອກບໍ່ເຫັນເທິງບັນຊີ ຄື ເລື່ອງ : ພູະວິຣະຕີ, ສັພະກິຈວິໄນ ແລະ ສັງຄາຍະນາ, ຢູ່ທີ່ນີ້ມີຜູ້ເຖົ້າຜູ້ແກ່ ພະສົງ ສາມະເນນ ມາຊ່ວຍອະນາໄມ ໂດຍສະເພາະພໍ່ຕູ້ຈານບົງ ແນວໂຮມບ້ານ ໄດ້ມາຕິດຕາມ ແລະຊ່ວຍເຫລືອດ້ວຍຄວາມຫ້າວຫັນ ເຮັດໃຫ້ຂັ້ນຕອນການອະນາໄມໃບລານ ກ່ອນການຖ່າຍໄມໂຄຣຟິມ ສະດວກຂຶ້ນຕື່ມ ການປະຕິບັດວຽກຂອງຫນ່ວຍ ເປັນໄປ ຢ່າງເຂັ້ມຂຸ້ນໃນແຕ່ລະມື້, ແຕ່ໃນການລ້າງຟິມ ກໍ່ຍັງມີບັນຫາຈາກໄຟຟ້າ ແລະ ເຄື່ອງຈັກລ້າງ ຈຶ່ງໄດ້ ຖ່າຍຄືນຈຳ ນວນ 8 ເລື່ອງ.

ເຄື່ອນຍ້າຍຂຶ້ນມາທີ່ວັດບ້ານຜ້າວເຫນືອ ທາງຫນ່ວຍ



*ຈະເລີນໄຊ ພົມມະວົງສາ ນັກວິຊາການ ກຳລັງກວດກາຟີມໄມໂຄຼຟີມ ທີ່ຖ່າຍ ແລະ ລ້າງແລ້ວ ກ່ອນຈະບັນທຶກຄັ້ງຕໍ່ໄປ*

ມາພົບກັບສະພາບຂອງໜັງສື ທີ່ຊອກບໍ່ເຫັນຕາມບັນຊີ ອີກຈຳນວນ 3 ເລື່ອງ ຄື: ອະວະຫາຣ (ສັພທ໌), ປາຕິໂມກ ປາລີ ແລະ ສັພທ໌, ວິນັຍສັງເຂພ, ທັງໝົດ 10 ຜູກ.

ໃນວັນທີ 16 ສິງຫາ 1994 ທາງໜ່ວຍໄດ້ມາຕິດຕັ້ງ ຈຸດຖ່າຍໄມໂຄຼຟີມທີ່ວັດທ່າງ່ອນ, ຈາກສະພາບຝົນຕົກໜັກ ເຮັດໃຫ້ໄຟຟ້າບໍ່ຄ່ອຍປົກກະຕິ ຈຶ່ງເຮັດໃຫ້ການເຮັດວຽກ ຊັກຊ້າອອກໄປ ສ່ວນສະພາບໃບລານທີ່ຖ່າຍ ກໍ່ມີຂະໜາດ ທີ່ແຕກຕ່າງກັນ, ສ່ວນຫລາຍຢູ່ໃນສະພາບທີ່ຊຸດໂຊມ ຈົນຕ້ອງຕິດສະກັອດໃໝ່ ຈຶ່ງຖ່າຍໄດ້, ແຕ່ບາງເລື່ອງຄື ເລື່ອງ : ກໍ່າພ້າກາບລາງ ບໍ່ສາມາດຖ່າຍໄດ້ ເພາະສະພາບ ໃບລານເປື່ອຍ ແລະ ຫັກອາດໄປເປັນສ່ວນຫລາຍ

ວຽກງານຖ່າຍ ໄມໂຄຼຟີມ ສຳເລັດແລ້ວ 9 ວັດ ໃນ ເຂດ ເມືອງໄຊທານີ ຄື: ວັດບ້ານໄຊ, ວັດບ້ານໄຜ່ລ້ອມ, ວັດສ້າງທົວບໍ່, ວັດນາ ຊອນໃຕ້, ວັດບ້ານຜ້າວເໜືອ, ວັດບ້ານຜ້າວໃຕ້ ແລະ ວັດທ່າງ່ອນ ຈຳນວນເລື່ອງ ທີ່ຖ່າຍ ໄດ້ມີ 299 ເລື່ອງ, 1.470 ຜູກ, ດ້ວຍການອຸ້ມຊູຊ່ວຍ ເຫລືອ ຈາກພະສົງ ສາມະເນນ, ເຖົ້າແກ່ແນວໂຮມ ໃນ ແຕ່ລະບ້ານ ນອກນັ້ນ ຍັງໄດ້ຮັບການຮ່ວມມື ຈາກອຳນາດ ການປົກຄອງ ໃນ ແຕ່ລະຂັ້ນ.

ປັດຈຸບັນ ທາງໜ່ວຍພວມຖ່າຍໄມໂຄຼຟີມ ໜັງສື ໃບລານຈາກວັດທົ່ງມັ່ງ ແລະ ທາດກ້ຽງ ໂດຍຕັ້ງຈຸດຖ່າຍ ຢູ່ທີ່ວັດທ່າງ່ອນ ເມືອງໄຊທານີ ກຳແພງນະຄອນ.

ຄາດວ່າ ໃນສົກປີ 1994-95 ນີ້ ຍັງຈະໄດ້ສືບຕໍ່ ຖ່າຍເອກະສານທີ່ສຳຄັນ ຢູ່ທົ່ວເຂດກຳແພງນະຄອນ ບ່ອນທີ່ ໜັງສືໃບລານໄດ້ຂຶ້ນບັນຊີ ແລະ ປົກປັກຮັກສາໄວ້ແລ້ວ ໃນໄລຍະ ຫລາຍປີຜ່ານມາ ຈາກນັ້ນ ກໍ່ຈະເຄື່ອນຍ້າຍໄປສູ່ ແຂວງວຽງຈັນ ແລະ ແຂວງອື່ນໆທົ່ວປະເທດ ໃນໂອກາດ ຕໍ່ໄປ.

## ຄຣາວາສປະຕິບັດ

*ທາງຈົບທາຍ ຮຽກວ່າ ອະບາຍະມຸຂ ມີ 4 ຢ່າງຄື : ອິດຖີທຸດໂຕ ເປັນນັກເລງແມ່ຍິງ 1 ສຸຣາທຸດໂຕ ເປັນນັກເລງເຫລົ້າ 1 ອັກຂີທຸດໂຕ ເປັນນັກເລງການພະນັນ 1 ປາປມິດຕາ ຄົບຄົນຊົ່ວເປັນມິດ 1*

# ໂຕງໂຕຍຄວາມເວົ້າ

ຖອດໂດຍ : **ມະຫາ ບຸນຍົກ ແສນສູນທອນ**

*ຈາກຫນັງສືໃບລານ ວັດສີສະຫວ່າງ ແຂວງໄຊຍະບຸລີ*

ບັດນີ້ ຈັກຈາແຕ່ກໍ່ຟ້າທໍ່ເກີດຫອຍກໍ່ພູກໍ່ດອຍ ທໍ່ຮອຍໃກ້
ປູກໄມ້ທໍ່ລໍາຫຽນ
ແຕ່ອະເນກະຊາດ ປຸບພາຈະລິຍະວາດ ແຕ່ປະຖົມ
ບູລົມມະກັບ ຕັບພະປິລະເມສວນ
ເທິງຫານມື່ນນານ ເຈຍລະການນານຫນັກ
ຕັ້ງເປັນບ້ານ ສ້າງເປັນເມືອງ
ຕັ້ງເປັນອານາຈັກ ຫລັກຄໍ້າທໍານອງ
ນໍ້າທ້ອນ ຕ່ອນດິນ ເຜີ້ງຜາ ນໍງາໄມ້ຜົກ ກົກເຮືອ
ຊ້າງຕາຍ ຄວາຍຫລ້ອນ
ງົວລາກຫວາຍ ຄວາຍລາກຄ່າວ ບ່າວລາກສາວ
ຂ້າລັກຫນີ ຊີລັກບວດ
ຊ້າງລັກຄ້າ ມ້າລັກຂາຍ
ງົວລັກຂາຍ ຄວາຍລັກຈ່າຍ
ຂ້າລັກໄປ ໄທຜາດ້ານ
ເຮັດບໍ່ແມ່ນຮີດ ຂີດບໍ່ແມ່ນຄອງ
ຜິດສູດບູດເຫມັນ ຜິດເກົ້າເທື່ອ ເບື່ອເກົ້າທີ
ຜິດຫລາຍບາດ ຂາດຫລາຍຮອຍ
ຜິດຫາຄຸນ ປຸນຫາໂທດ ໂກດຫາເຂັນ
ຂັບເຜີ້ງລຽນ ຂັບທຽນຕັ້ງ
ຂັນດອກໄມ້ໃສ່ຫົວ ຂັນດອກບົວໃສ່ເກົ້າ
ໂຜດຄົນຫລາຍສໍ່າ ຕໍ່າຜ້າຫລາຍຜືນ
ບໍ່ຮູ້ຈຶ່ງໄດ້ເປັນ ບໍ່ເຫັນຈຶ່ງໄດ້ຕ້ອງ
ບໍ່ຮູ້ຈຶ່ງເປັນຜັກ ບໍ່ຫລັກຈຶ່ງເປັນໄຜ່
ບໍ່ໃຫຍ່ຈຶ່ງ ເປັນຊາວເມືອງ
ບໍ່ຮູ້ຈຶ່ງໄດ້ຜິດ ທຸຈະລິດຈຶ່ງໄດ້ພະລາດ
ປາວຸດຕິຂ່າວສານ ກິລິຍາອາການ
ສັນຍານບອກຂ່າວ ປ່າວເຕີນຄໍາຮ້ອງ
ໃກ້ຖຸດລັດລຽງ ຊັ້ນເຊື້ອເນື້ອຫນັງ
ພີ່ອອກທ້ອງ ນ້ອງອອກຫົວ
ເປັນພີ່ເປັນນ້ອງ ແມ່ປ້ານ້າສາວ ລູງອາວຊາວພໍ່
ຊັ້ນເຊື້ອເນື້ອຫນັງ ເຜົ່າພົງວົງຍາດ
ຂ້ອຍໄຖໄກ່ຊື້ ຂ້ອຍຂ້າທາສາ
ຂື້ນພູຈຶ່ງໄດ້ ຂື້ນໄມ້ຈຶ່ງເຫັນ
ເມືອງອີງບ້ານໃຕ້ - ເຫນືອ ເຮືອອີງທ່າ
ແຂກຢູ່ຄ້າ ມ້າຢູ່ຂາຍ
ເປັນຂັ້ນໄດໄລແກ້ວ ເປັນຂົວສະພານລານແກ້ວ
ບ້ານຊ່ອງທ່ອງເຖິງ
ຢູ່ຮ່ວມບ້ານ ຕ້ານຮ່ວມພີ່
ລ້ຽງກັນມາ ພາກັນໃຫຍ່
ກິນເຂົ້າຮ່ວມພາ ກິນຢາຮ່ວມກອກ
ໄປຫາ ມາແວ່ ໄປລາ ມາຄອບ
ໄປຢ່າໄດ້ຂວ້າມຕາ ມາຢ່າໄດ້ຂວ້າມຫນ້າ
ຢ່າຕີຈາກພາກເວັ້ນ
ຢ່າເຮັດຫນ້າຂວ້າມຕາກາຍ
ເຫັນຫນ້າໃຫ້ຄອຍ ເຫັນຮອຍໃຫ້ຢ້ຽມ
ເວົ້າກັນພໍ່ ອໍກັນແມ່
ສັງຮອມກ່ອມຄວາມ ຫອມທົບ ຫຍັບມາ
ພ້ອມພຽງຮຽງຫນ້າ ພ້ອມພັບກັບກັນ
ໃຈພ້ອມແຂງ ແຮງພ້ອມປາກ
ປາກພ້ອມໄວ ໃຈພ້ອມຮອບ
ບໍ່ຄຶດລະວ້າງຕ່າງຄວາມ ຕົວະລ່າຍພາຍພາງ
ຄົດໃນຄໍ ງໍໃນລື້ນ
ນໍ້າໃສໃຈຊື່
ເຖົ້າຫລົງຄອກ ຫງອກຫລົງເຮືອນ
ເຖົ້າແກ່ຊະລາການ ເນື້ອຫນັງຍານກູກລົ່ນ
ຕີນປີສັ່ນໄປມາ

ຫູຕາຫລົງຜັ້ງພາດ ທັງພະຍາດສິງຜີ ດ້ອຍອາລົມຄຳປາກ
ປັນຍາວິຊາອົງອາດ ສະລາດຮູ້ອ່ອງໄວ
ຄຽດອົມອົມຟາດ ໂກດກ້າ ທ້າສຽງແຂງ
ບິດລັງຂັງຂໍ້ ຂີ້ສີ້ລັງແກ
ຕີໜູຊາ ຕີໝາສຽດ
ຜີເອົາທາງ ຕາງເອົາອ້ອຍ ປ້ອຍເອົາຄວາມ
ເສຍນ້ອຍເສຍຍາກ ເສຍມາກເສຍງ່າຍ
ໃນຫ້ອງຫ້ອງວັງ ຫ້ອງຊ້າງອ່າງເມືອງ
ໃນເຮືອນຫລວງຄວ່າງຜາສາດ ມີນທຽນອາດພະກະສັດ
ລັດຕະນະບູລີ ເທບພະມະຫານະຄອນ
ຢູ່ຍືນກິນກັບ ຢູ່ມັບກັບພາ
ລ້ຽງກັນມາ ພາກັນໃຫຍ່
ກິນເຂົ້າຮ່ວມພາ ກິນປາຮ່ວມຖ້ວຍ ກິນກ້ວຍຮ່ວມຫວີ
ເອົາບຸນຮ່ວມວັດ ຕັດເຂົ້າຮ່ວມທົ່ງ
ເຄື່ອງກັບເນື້ອ ເສື້ອກັບຄີງ ປັດນ້ອຍ ສ້ອຍສັງວານ
ເສື້ອຜ້າ ອາພອນ ລົ້ວແຮ ແພກະສາ
ສັງກາດ ພາດບັງຊີ
ເຊື້ອໄຂໄອຍະໂກ ໂພຊະນະອາຫານ
ເຄື່ອງຂື້ວຂອງຈີນ ເຂົ້າຕົ້ມເຂົ້າໜົມ
ກົງກວຽນສຽນເມັດ
ບ້ານເມືອງ ຂອຍໄພ່ ປະຊາ ນາລາດ
ໃຫ້ສັງລ່ອງຄ່ອງກັນ ເປັນສະເພົາເລົາດຽວ
ເປັນອົງສະພານລານແກ້ວ ເປັນບ້ານຊ່ອງຫ່ອງເຖິງ
ລາວເວົ້າເມືອໜ້າ ຂ້າເວົ້າເມືອຫລັງ
ຜູ້ໜຶ່ງບິດເມືອຂ້າງ ຜູ້ໜຶ່ງວ້າງເມືອຫລັງ
ຜູ້ໜຶ່ງຊັກເມືອແອກ ຜູ້ໜຶ່ງແຍກເມືອໄຖ
ຜູ້ໜຶ່ງຊັກເມືອຮູ ຜູ້ໜຶ່ງຖູເມືອເຖິ້ງ
ຄີນທຸກຜູ້ດຽວ ເປັນກຳພ່ຳໜ້າ
ທຸກຍາກປາກໝອງ ທຸກໄຮ້ຂີນໃຈ ທຸກຂະມອດທອດໄຮ້
ເສື້ອຂາດໜ້າ ຜ້າຂາດຫລັງ
ເຂົ້າຂາດແລງ ແກງຂາດໝໍ້
ຜັດພາກຈາກຫລົງ ເຂົ້າປ່າໃຫຍ່ໄພໝາ

ມີນຕາບໍ່ເຫັນພີ່ ຫີຕາບໍ່ເຫັນນ້ອງ
ໃຜຕາຍກໍບໍ່ເຫັນ ໃຜເປັນກໍບໍ່ຮູ້
ຫີນທວາຍທວາຍຫີ້ນ
ໂສກເສົ້າຊົບເຊົາ
ໜ້າໝ້ອມຕາຕອມ
ຫົດຫຍໍ້ຫໍ່ຖອຍ ຫວັ່ນໄຫວໄປມາ
ໜ້າເປື່ອຕາຕາຍ ສິ່ນສາຍລາຍຕາ
ພະຂະຍອມຜອມໄຂ້ ອະເຫີ່ມເຕີມເຫລືອງ
ບ່າແດງແຮງນ້ອຍ
ໃຫ້ຫາໝໍມີນຄົນຮູ້ສາດຕະ
ເຈົ້າຮີດເຈົ້າຄອງທ່ານອງບົດບາດ
ຄາຖາປາລີ ຄຳພີດີກາ
ປາຣາຊີກັນ ສະໝັນສະໝາດ
ລ້ຽງໝູຢາກກິນດູກ ລ້ຽງລູກຢາກກິນແຮງ
ປູກແຕງຢາກກິນໝ່ວຍ ປູກກ້ວຍຢາກກິນລຳ
ເຄາະມື້ເອັນ ເຍັນມື້ເຊົ້າ
ເຄາະມື້ແລງປວດເອົ່າ ເຄາະມື້ເຊົ້າປວດຫົວ
ເຄາະມືດມົວຕາບໍ່ແຈ້ງ
ຂໍໃຫ້ຂວີ່ຫົວນັ່ງເຝົ້າ ຂວີ່ເກົ້ານັ່ງແນມ
ໃຫ້ມີອາຍຸໝັ້ນຍືນ ຮ້ອຍເອັດພັນວັດສາ
ໃຫ້ມີໂຊກໄຊຊະນະພາບແພ້ຂ້າເສິກສັດຕູ
ນອນຫລັບໃຫ້ໄດ້ເງິນໝື່ນ ນອນຕື່ນໃຫ້ໄດ້ເງິນແສນ
ໃຫ້ໄດ້ເງິນພັນໄຖ່ ໃຫ້ໄດ້ໄພ່ແສນເມືອງ
ໄດ້ເງິນໃຫ້ໄດ້ມື້ກຳ ໄດ້ຄຳໃຫ້ໄດ້ມື້ກອບ
ບ່ອນເອັດໃຫ້ຢາ ບ່ອນຄຳໃຫ້ຢ້ານ
ຢ່າຜີເຖົ້າ ຢ່າເຈົ້າຢືນ
ຢ່າພຸດທະສາສະໜາໄດ້ບຸນ ຢ່າຂຸນໄດ້ເປັນໃຫຍ່
ຢ່ານັກປາດໄດ້ວິຊາ ຢ່າຜູ້ມີພະຫຍາໄດ້ຄຸນອັນປະເສີດ.

❀❀

# ແຂວງຫລວງພະບາງ ແລະ ແຂວງໄຊຍະບູລີ

## ເອກະສານສຳຄັນ ທີ່ພົບເຫັນ

| ລ/ດ | ເມືອງ / ຊື່ເລື່ອງ | ຊື່ວັດ | ຈຳນວນ ຜູກ | ຈ.ສ. ພ.ສ. | ໝາຍເຫດ |
|---|---|---|---|---|---|
| | * ແຂວງຫລວງພະບາງ | | | | |
| | * ເມືອງຫລວງພະບາງ | | | | |
| 1 | - ທັມມະບົດ ມັດ 12 | ວັດຄີລີ ບ້ານຄີລີ | 9 | ຈ.ສ. 1204 | |
| 2 | - ທີຄະນິກາຍ | 〃 | 11 | | |
| 3 | - ສີສະຕົນທະວັກຄະ | 〃 | 10 | | |
| 4 | - ສັພທ໌ ປາຣາຊິກັນດ໌ ມັດ 1 | ວັດແສນສຸຂາຣາມ | 10 | ຈ.ສ. 1175 | |
| 5 | - ຈຸນລະທັມມະປາລະ | 〃 | 10 | ຈ.ສ. 1222 | |
| 6 | - ວິສຸດທິມັຄ ມັດ 1 | 〃 | 17 | ຈ.ສ. 1222 | |
| 7 | - ສິນທີ່ຄິດ, ສຸດທີ່ອ່າວ | 〃 | 1 | | |
| 8 | - ຕຳນານນິທານເມືອງຊຽງດົງ, ຊຽງທອງ ຊຽງຫລວງ | 〃 | 1 | | |
| 9 | - ມະຫາຂັນທະກະ | ວັດໃຫມ່ສຸວັນນະພູມມາຣາມ | 13 | ພ.ສ. 2467 | |
| 10 | - ສັກກະຕິທີປະນີ ມັດ 1 ເຖິງ 2 | 〃 | 36 | ຈ.ສ. 1211 | ມີ 2 ຊຸດ |
| 11 | - ທັມມະບົດ ມັດ 1 ເຖິງມັດທີ 17 | 〃 | 402 | 1181/1123 | |
| 12 | - ປາລີທັມມະບົດ | 〃 | 18 | ຈ.ສ. 1166 | |
| | * ແຂວງໄຊຍະບູລີ | | | | |
| | * ເມືອງໄຊຍະບູລີ | | | | |
| 1 | - ສານໃບ້ ສີ່ຫມອກ | ວັດສີສະອາດ | 1 | | |
| 2 | - ແສງເມືອງ | ວັດນາທ່ອນດອນໃຈ | 4 | | |
| 3 | - ແສງປີ | 〃 | 6 | | |
| 4 | - ຄອງເມືອງ | ເຫບພະສີລິນທະ | 1 | | |
| 5 | - ຄຳກອນກົດຫມາຍ | ຣາຣາມ | 1 | | |
| 6 | - ຕຳນານພະແກ້ວ | ວັດສີຈັນ ບ້ານບຶ້ງ | 1 | ພ.ສ. 2303 | |
| 7 | - ສຸຊາວັນນະຈັກກຸມມານ | ສັກຄະລິນທະຄູຫາ | 6 | ພ.ສ. 2436 | |
| 8 | - ໂຄງໂຕຍຄວາມເວົ້າ | ວັດສີສະຫວ່າງ | 1 | | |
| 9 | - ກົດຫມາຍ | ວັດສີບຸນເຮືອງ | 1 | | |
| | * ເມືອງປາກລາຍ | | | | |
| 1 | - ກາບສະລະສາຍຄຳ | ວັດສີສະຫວ່າງວົງ | 1 | | |
| 2 | - ຫນັງສືເກາະລັງກາ | 〃 | 1 | | ຢູ່ນຳວັດທະນະທຳເມືອງ |
| 3 | - ນິທານທ້າວເຈືອງ | ສີສະອາດນົງຄົນ | 1 | | |
| 4 | - ດິນໂຮ່ນາທ້າວພະຍາ | 〃 | 1 | | |

# ສະຖິຕິ ວັດ ແລະ ໜັງສືໃບລານ ທີ່ສຳຫລວດແລ້ວ

ແຂວງຫລວງພະບາງ ແລະ ແຂວງໄຊຍະບູລີ

ໂຄງການປີທີ II ແຕ່ເດືອນ ເມສາ-ກັນຍາ 1994

| ລ/ດ | ແຂວງ/ເມືອງ/ວັດ | ບ້ານ | ຈຳນວນ ຜູກ | ຈຳນວນ ໃບສຳ ຫລວດ | ຈຳນວນ ເລື່ອງ | ຈຳນວນ ມັດ | ຖ່າຍໄມໂຄຣຟິມ | |
|---|---|---|---|---|---|---|---|---|
| | | | | | | | ຜູກ | ໃບ |
| I. | ແຂວງຫຼວງພະບາງ | | | | | | | |
| | * ເມືອງຫຼວງພະບາງ | | | | | | | |
| 1 | - ວັດຄີລີ | ບ້ານຄີລີ | 1.758 | 279 | 169 | 235 | 291 | 7.573 |
| 2 | - ວັດ ປາກຄານ | ບ້ານຄີລີ | 81 | 36 | 36 | 9 | - | - |
| 3 | - ວັດແສນສຸຂາຣາມ | ບ້ານວັດແສນ | 3.330 | 598 | 436 | 330 | 925 | 25.553 |
| 4 | - ວັດໃໝ່ສຸວັນນະພູມມາຣາມ | ບ້ານປ່າຂາມ | 4.558 | 776 | 493 | 557 | 908 | 22.987 |
| 5 | - ວັດຊຽງທອງ | ບ້ານຊຽງທອງ | 2.045 | 347 | 225 | 221 | 441 | 12.312 |
| 5 | ລວມ : ຂ. ຫຼວງພະບາງ | | 11.772 | 2.036 | 1.359 | 1.352 | 2.565 | 68.425 |
| II. | ແຂວງໄຊຍະບູລີ | | | | | | | |
| | * ເມືອງ ໄຊຍະບູລີ | | | | | | | |
| 1 | - ວັດ ສີບຸນເຮືອງ | ບ້ານໃຫຍ່ | 369 | 111 | 90 | 39 | 2 | 289 |
| 2 | - ວັດ ສີສະຫວ່າງວົງ | | 375 | 127 | 120 | 29 | 2 | 69 |
| 3 | - ວັດແສນດີດອນໃຈແກ້ວ ກວ້າງ | ບ້ານນາຫລາ | 109 | 28 | 26 | 8 | 1 | 11 |
| 4 | - ວັດສີບຸນເຮືອງ | ບ້ານນາແລ້ງ | 112 | 46 | 43 | 5 | 10 | 144 |
| 5 | - ວັດສີສະອາດ | ບ້ານວັງຂົ້ນ | 28 | 14 | 13 | 2 | 2 | 17 |
| 6 | - ວັດດອນໂພ | ບ້ານນາຄູນ | 74 | 22 | 21 | 4 | - | - |
| 7 | - ວັດນາທ່ອນດອນໃຈ | ບ້ານນາທ່ອນ | 245 | 68 | 88 | 12 | 14 | 335 |
| 8 | - ວັດພາດສາມະຄີທຳ | ບ້ານຕົ້ນອຍ | 30 | 15 | 20 | 1 | - | - |
| 9 | - ວັດໂພທິຣຸກນາລາມ | ບ້ານນາຕີໃຫຍ່ | 38 | 22 | 30 | 3 | 1 | 50 |
| 10 | - ວັດພົນພະສີລິນທະຣາຣາມ | ບ້ານແກ້ງຄອຍ | 51 | 25 | 24 | 4 | 5 | 219 |
| 11 | - ວັດໂພນໄຊຍາລາມ | ບ້ານຜາປູນ | 47 | 19 | 17 | 3 | - | - |
| 12 | - ວັດສີພັນດອນ | ບ້ານບຸ່ງ | 63 | 34 | 34 | 5 | - | - |
| 13 | - ວັດຊຽງຫລວງອານຸລັກ | ບ້ານນາໄຮ | 28 | 17 | 17 | 3 | - | - |



ປະຊາຊົນ ບ້ານໃຫຍ່ (ເມືອງ ແລະ ແຂວງ ໄຊຍະບູລີ) ກັບປະເພນີ ການຕີກອງໂພ່ງ

| ລ/ດ | ແຂວງ/ເມືອງ/ວັດ | ບ້ານ | ຈຳນວນ ຜູກ | ຈຳນວນ ໃບສຳຫລວດ | ຈຳນວນ ເລື່ອງ | ຈຳນວນ ມັດ | ຖ່າຍໄມໂຄຼຟິມ | |
|---|---|---|---|---|---|---|---|---|
| | | | | | | | ຜູກ | ໃບ |
| 14 | - ວັດທະຣະນາຣາມ | ບ້ານທ່ານາ | 135 | 52 | 50 | 6 | - | - |
| 15 | - ວັດສີຈັນ | ບ້ານປຶ້ງ | 201 | 60 | 58 | 11 | 7 | 143 |
| 16 | - ວັດທີຕາຣາມ | ບ້ານນາຍາວໃຕ້ | 123 | 35 | 33 | 5 | 1 | 16 |
| 17 | - ວັດສັກຄະລິນທະຄູຂາ | ບ້ານທ່າເດື່ອ | 389 | 88 | 68 | 19 | 7 | 148 |
| | ລວມ | | 2.417 | 782 | 752 | 159 | 52 | 1.441 |
| | * **ເມືອງປາກລາຍ** | | | | | | | |
| 18 | - ວັດສີສະຫວ່າງວົງ | ບ້ານສີສະຫວ່າງ | 349 | 123 | 94 | 25 | 5 | 461 |
| 19 | - ວັດສີສະອາດຊົມພູ | ສີສະອາດຊົມພູ | 43 | 18 | 18 | 3 | - | - |
| 20 | - ວັດສີສະອາດມົງຄົນ | ບ້ານໄຊຍະມຸງຄຸນ | 445 | 111 | 104 | 24 | 3 | 920 |
| | ລວມ | | 837 | 252 | 216 | 52 | 8 | 1.381 |
| 20 | ລວມ : ຂ. ໄຊຍະບູລີ | | 3.254 | 1.034 | 968 | 211 | 60 | 2.822 |
| 25 | ລວມທັງຫມົດ | | 15.026 | 3.070 | 1.575 | 1.404 | 2.625 | 71.247 |


ເຈົ້າຂອງ
ໂຄງການປົກປັກຮັກສາຫນັງສືໃບລານລາວ
ສຳນັກງານ
ກະຊວງຖະແຫລງຂ່າວ ແລະ ວັດທະນະທຳ
ຕູ້ ປ.ນ. 1631 ໂທລະສັບ 213029
ພິມທີ່ ວາລະສານ ວັນນະສິນ

ຄະນະຈັດທຳ
ຫົວຫນ້າບັນນາທິການ : ດາຣາ ກັລຍາ
ຜູ້ຊ່ວຍບັນນາທິການ : ຈັນສະຫມຸດ ທິລະກຸນ
ຄອມພິວເຕີ : ຄຳພັກ ວົງສັກດາ
ໂອທອງ ຄຳອິນຊູ